**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ເລກທີ 148 ສປປ

ນະຄອນຫຼວງວຽງຈັນ, ວັນທີ 17. 7. 2007.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

~~~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 42/ສພຊ, ລົງວັນທີ 2 ກໍລະກົດ 2007 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ, ລົງວັນທີ 13 ກໍລະກົດ 2007.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 42 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ

## ກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃນວາລະປະຊຸມຕອນບ່າຍຂອງວັນທີ 2 ກໍລະກົດ 2007

## ກອງປະຊຸມໄດ້ຕົກລົງ:

**ມາດຕາ 1.** ຮັບຮອງເອົາກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

**ມາດຕາ 2.** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 2 ກໍລະກົດ 2007

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 03 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 2 ກໍລະກົດ 2007

# ກົດໝາຍ
# ວ່າດ້ວຍ ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍ ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ກໍານົດ ຫລັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອຮັບປະກັນໃຫ້ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄວາມຊໍານິຊໍານານທາງດ້ານວິຊາສະເພາະ, ມີລະບຽບວິໄນເຂັ້ມງວດ, ແບບແຜນວິທີເຮັດວຽກນັບມື້ນັບກ້າວຫນ້າ ແລະ ທັນສະໄໝ ແນໃສ່ເຮັດສໍາເລັດຫນ້າທີ່ອັນມີກຽດສະຫງ່າຂອງຕົນ ໃນການຮັບໃຊ້ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ, ປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 2. ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ**

ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນກໍາລັງປະກອບອາວຸດຂອງພັກ-ລັດ, ມາຈາກປະຊາຊົນ, ໂດຍປະຊາຊົນ ແລະ ຮັບໃຊ້ປະຊາຊົນບັນດາເຜົ່າ ໃນການປົກປັກຮັກສາຄວາມສະຫງົບຂອງປະເທດຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເປັນກໍາລັງທີ່ມີຫລາຍເຫລົ່າລົບ ຊຶ່ງປະກອບດ້ວຍນັກຮົບຊັ້ນສອງເຖິງນາຍພົນ ທີ່ມີເຄື່ອງແບບ, ເຄື່ອງໝາຍຊັ້ນ, ເຄື່ອງໝາຍເຫລົ່າລົບສະເພາະ ແລະເປັນບຸກຄົນ ຊຶ່ງໄດ້ຮັບການຄັດເລືອກ, ບັນຈຸ, ແຕ່ງຕັ້ງຕາມກົດໝາຍສະບັບນີ້.

ນອກຈາກນີ້ ກໍາລັງປ້ອງກັນຄວາມສະຫງົບປະຊາຊົນຍັງປະກອບດ້ວຍກໍາລັງເຄິ່ງອາຊີບ ຊຶ່ງໄດ້ຮັບການແຕ່ງຕັ້ງໃຫ້ເຮັດໜ້າທີ່ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ຮາກຖານ.

ມາດຕາ 3. **ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ປກສ ໝາຍເຖິງ** ປ້ອງກັນຄວາມສະຫງົບ;
2. **ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໝາຍເຖິງ** ກຳລັງທີ່ເຮັດໜ້າທີ່ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຊຶ່ງປະກອບດ້ວຍ ກຳລັງອາຊີບ ແລະ ເຄິ່ງອາຊີບ;
3. **ກຳລັງອາຊີບ ໝາຍເຖິງ** ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ໄດ້ຮັບການກໍ່ສ້າງ, ບຳລຸງວິຊາສະເພາະຢ່າງເປັນລະບົບ, ຖືກບັນຈຸເຂົ້າໃນກົງຈັກການຈັດຕັ້ງຂອງກະຊວງປ້ອງກັນຄວາມສະຫງົບ ແລະໄດ້ຮັບການປະກອບອາວຸດ, ເຕັກນິກວິຊາສະເພາະຢ່າງຄົບຖ້ວນ;
4. **ກຳລັງເຄິ່ງອາຊີບ ໝາຍເຖິງ** ກຳລັງ ປ້ອງກັນຮັກສາຄວາມສະຫງົບຂອງບ້ານ, ປ້ອງກັນພາຍໃນ, ປ້ອງກັນຕົວ ແລະ ບໍລິການຄວາມປອດໄພ ທີ່ເຮັດວຽກງານປ້ອງກັນຄວາມສະຫງົບຢູ່ຮາກຖານບ້ານ, ສຳນັກງານ, ອົງການ, ຫົວໜ່ວຍທຸລະກິດຕ່າງໆ ຊຶ່ງບໍ່ໄດ້ຮັບການປະດັບຊັ້ນ ຄືກັນກັບກຳລັງອາຊີບ;
5. **ກຳລັງວິຊາສະເພາະຕຳຫລວດ ໝາຍເຖິງ** ກຳລັງທີ່ເຮັດໜ້າທີ່ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປ້ອງກັນ, ສະກັດກັ້ນ, ຕ້ານອາຊະຍາກຳ, ດຳເນີນຄະດີອາຍາ, ຄຸ້ມຄອງພົນລະເມືອງ, ການຈະລາຈອນ, ກັນ ແລະ ສະກັດກັ້ນອັກຄີໄພ;
6. **ກຳລັງຕຳຫລວດສັນຕິບານ ໝາຍເຖິງ** ກຳລັງທີ່ເຮັດໜ້າທີ່ປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ, ປ້ອງກັນ, ສະກັດກັ້ນ, ຕໍ່ສູ້, ທັບມ້າງທຸກກົນອຸບາຍ ແລະ ການເຄື່ອນໄຫວທຳລາຍຄວາມໝັ້ນຄົງຂອງປະເທດຊາດ;
7. **ການປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ ໝາຍເຖິງ** ການຊອກຮູ້, ສະກັດກັ້ນ ແລະຕ້ານກົນອຸບາຍມ້າງເພທຳລາຍຄວາມໝັ້ນຄົງຂອງປະເທດຊາດ;
8. **ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໝາຍເຖິງ** ການຊອກຮູ້, ສະກັດກັ້ນ, ຕ້ານອາຊະຍາກຳ ແລະປາກົດການຫຍໍ້ທໍ້ອື່ນໆ ໃນສັງຄົມ;
9. **ອາຊະຍາກຳ ໝາຍເຖິງ** ການກະທຳຜິດທາງອາຍາ;
10. **ນາຍ ແລະພົນຕຳຫລວດ ໝາຍເຖິງ** ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ;
11. **ນາຍຕຳຫລວດ ໝາຍເຖິງ** ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ ຜູ້ມີຊັ້ນແຕ່ຮ້ອຍຕີ ເຖິງ ນາຍພົນ;
12. **ພົນຕຳຫລວດ ໝາຍເຖິງ** ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ ຜູ້ມີຊັ້ນແຕ່ ນັກຮົບຊັ້ນສອງ ເຖິງວາທີຮ້ອຍຕີ;
13. **ຊັ້ນສອງ ໝາຍເຖິງ** ຊັ້ນຕ່ຳສຸດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
14. **ວາທີຮ້ອຍຕີ ໝາຍເຖິງ** ຊັ້ນກຽມຂຶ້ນຮ້ອຍຕີ;

15. **ປກສ ກຸ່ມບ້ານ ໝາຍເຖິງ** ກຳລັງອາຊີບ ຊຶ່ງປະຕິບັດໜ້າທີ່ຢູ່ຕາມກຸ່ມບ້ານພັດທະນາ ແລະ ຂຶ້ນກັບ ປກສ ເມືອງ;

16. **ປກສ ບ້ານ ໝາຍເຖິງ** ກຳລັງເຄິ່ງອາຊີບທີ່ເຮັດວຽກງານປ້ອງກັນຄວາມສະຫງົບຢູ່ບ້ານ.

## ມາດຕາ 4. ຫລັກການ ຈັດຕັ້ງ ແລະການເຄື່ອນໄຫວ

ໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ປະຕິບັດຫລັກການພື້ນຖານດັ່ງນີ້:

1. ຢູ່ພາຍໃຕ້ການນຳພາ ເດັດຂາດ, ໂດຍກົງ ແລະຮອບດ້ານຂອງພັກປະຊາຊົນປະຕິວັດລາວ;
2. ປະທານປະເທດ ເປັນຜູ້ບັນຊາການສູງສຸດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
3. ນາຍົກລັດຖະມົນຕີ ເປັນຜູ້ຊີ້ນຳ, ນຳພາລວມ ແລະ ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
4. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ບັນຊາໂດຍກົງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທັງເປັນຜູ້ຈັດຕັ້ງ ນຳພາ, ຊີ້ນຳ, ບັນຊາ, ຄຸ້ມຄອງ ແລະ ກວດກາຕາມສາຍຕັ້ງວິຊາສະເພາະ ການຈັດຕັ້ງປະຕິບັດໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
5. ຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຕ່ລະຂັ້ນ ເປັນຜູ້ຊີ້ນຳ, ນຳພາ ແລະ ກວດກາໂດຍກົງ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
6. ນາຍ ແລະ ພົນຕຳຫລວດ ທີ່ມີຕຳແໜ່ງ ຫລື ຊັ້ນສູງກວ່າ ແມ່ນຂັ້ນເທິງຂອງນາຍ ແລະ ພົນ ຕຳຫລວດ ຜູ້ທີ່ມີຕຳແໜ່ງ ຫລື ຊັ້ນຕ່ຳກວ່າ;

   ຜູ້ທີ່ມີຕຳແໜ່ງສູງກວ່າ ແຕ່ມີຊັ້ນເທົ່າກັນ ຫລື ຕ່ຳກວ່າ ແມ່ນຂັ້ນເທິງຂອງຜູ້ທີ່ມີຊັ້ນເທົ່າກັນ ຫລື ສູງກວ່າ;
7. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຜູ້ບັນຊາການຂັ້ນລຸ່ມຕ້ອງມີຄວາມຮັບຜິດຊອບຕໍ່ຜູ້ບັນຊາການຂັ້ນເທິງ ໃນການຈັດຕັ້ງປະຕິບັດວຽກງານຂອງກົມກອງທີ່ຕົນຮັບຜິດຊອບ;
8. ເປັນຜູ້ປົກປ້ອງກົດໝາຍ, ເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍ, ອີງໃສ່ປະຊາຊົນ ແລະ ຢູ່ໃຕ້ການກວດກາຂອງປະຊາຊົນ.

## ມາດຕາ 5. ນະໂຍບາຍຂອງລັດຕໍ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ລັດມີນະໂຍບາຍສົ່ງເສີມກໍ່ສ້າງ ແລະ ພັດທະນາກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ເຕີບໃຫຍ່ ເຂັ້ມແຂງ ຮອບດ້ານ, ມີຄວາມໜັກແໜ້ນທາງດ້ານການເມືອງ ແນວຄິດ, ຄວາມຮູ້, ຄວາມສາມາດ; ປະກອບພາຫະນະ, ອາວຸດຍຸດໂທປະກອນ, ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ; ສະໜອງງົບປະມານ, ແກ້ໄຂຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ໃຫ້ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອຮັບປະກັນໃຫ້ເຮັດສຳເລັດໜ້າທີ່ປົກປັກຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຊີວິດ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ.

**ມາດຕາ 6. ພັນທະຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີພັນທະດັ່ງນີ້:

1. ປົກປັກຮັກສາ ພັກປະຊາຊົນປະຕິວັດລາວ ແລະລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທັງເຂົ້າຮ່ວມໃນການສ້າງສາພັດທະນາປະເທດຊາດ;
2. ປົກປ້ອງອຸດົມການສັງຄົມນິຍົມ, ຮັບໃຊ້ປະເທດຊາດ ແລະ ປະຊາຊົນ ດ້ວຍຄວາມສັດຊື່ບໍລິສຸດ;
3. ຝຶກຝົນຫລໍ່ຫລອມຄຸນສົມບັດສິນທຳປະຕິວັດ, ຈັນຍາທຳຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ; ຮ່ຳຮຽນ, ຝຶກແອບວິຊາສະເພາະໃຫ້ຊຳນິຊຳນານ ແລະ ເຄົາລົບນັບຖືຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;
4. ກຽມພ້ອມປະຕິບັດໜ້າທີ່ ແລະ ສູ້ຮົບ, ຍອມເສຍສະລະຊີວິດ ເພື່ອປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ;
5. ເຄົາລົບ ການຈັດຕັ້ງ, ປະຕິບັດມະຕິຄຳສັ່ງຂອງຜູ້ບັງຄັບບັນຊາ, ລະບຽບວິໄນຂອງກຳລັງປ້ອງກັນຄວາມສະຫງົບ ຢ່າງເຂັ້ມງວດ ແລະ ເດັດຂາດ;
6. ປົກປ້ອງ ແລະຈັດຕັ້ງປະຕິບັດກົດໝາຍຢ່າງເຂັ້ມງວດ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 7. ພັນທະຂອງສັງຄົມ**

ການປ້ອງກັນຄວາມສະຫງົບ ແມ່ນວຽກງານຂອງທົ່ວປວງຊົນ; ບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ດ້ວຍການເຂົ້າຮ່ວມ, ຊ່ວຍເຫລືອ, ປະກອບ ພາຫະນະ, ຊັບສິນ ແລະ ອື່ນໆ ທີ່ຈຳເປັນຕາມຄວາມສາມາດຕົວຈິງໃຫ້ແກ່ວຽກງານດັ່ງກ່າວ.

**ມາດຕາ 8. ການພົວພັນຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ, ສາກົນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ບົນພື້ນຖານແນວທາງການຕ່າງປະເທດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການກໍ່ສ້າງຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ໃຫ້ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແລະການແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງວຽກງານປ້ອງກັນຄວາມສະຫງົບ.

## ໝວດທີ II
## ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

**ມາດຕາ 9. ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ ແມ່ນກຳລັງປະກອບອາວຸດ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ຊຶ່ງເປັນເສນາທິການໃຫ້ແກ່ລັດຖະບານ ໃນວຽກງານປ້ອງກັນຄວາມສະຫງົບ, ມີ

ພາລະບົດບາດ ປົກປັກຮັກສາຄວາມໝັ້ນຄົງຂອງຊາດ, ລະບອບປະຊາທິປະໄຕປະຊາຊົນ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປ້ອງຜົນປະໂຫຍດຂອງລັດ ແລະ ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 10. ໜ້າທີ່**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ເຊື່ອມຊຶມ ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ, ຂໍ້ຕົກລົງ ແລະ ມະຕິຄຳສັ່ງ ຂອງກະຊວງປ້ອງກັນຄວາມສະຫງົບ;
2. ປ້ອງກັນ ຜູ້ນຳພັກ-ລັດຂັ້ນຕ່າງໆ, ແຂກຕ່າງປະເທດ, ທີ່ຕັ້ງ ກົດຈະການສຳຄັນ, ກອງປະຊຸມ, ງານບຸນຕ່າງໆ, ບັນດາການຈັດຕັ້ງພາຍໃນ ແລະ ຕ່າງປະເທດປະຈຳລາວ, ຊີວິດ, ຊັບສິນ, ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ໂຄສະນາເຜີຍແຜ່ ແນວທາງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປຸກລະດົມຂົນຂວາຍປະຊາຊົນລາວບັນດາເຜົ່າ, ກໍ່ສ້າງຮາກຖານການເມືອງ, ສ້າງທ່າສະໜາມປ້ອງກັນຄວາມສະຫງົບ ໃນຂອບເຂດທົ່ວປະເທດ;
4. ປັບປຸງ, ກໍ່ສ້າງກຳລັງໃຫ້ໜັກແໜ້ນທາງດ້ານການເມືອງ ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ເພື່ອເຮັດສຳເລັດໜ້າທີ່ຂອງຕົນ;
5. ກວດກາການເຄົາລົບ ແລະການປະຕິບັດກົດໝາຍຢູ່ໃນສັງຄົມ;
6. ປ້ອງກັນ, ສະກັດກັ້ນ, ຕ້ານທຸກກົນອຸບາຍເລ່ຫລ່ຽມທີ່ຫວັງທຳລາຍມ້າງເພ, ແບ່ງແຍກ, ສ້າງຄວາມປັ່ນປ່ວນ ກໍ່ຄວາມບໍ່ສະຫງົບ ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຕ້ານອາຊະຍາກຳ ແລະຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
7. ກຽມພ້ອມສູ້ຮົບ, ສູ້ຮົບພິລະອາດຫານ, ຍອມເສຍສະລະຊີວິດເພື່ອປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ ຍາມໃດກໍຖືເອົາຜົນປະໂຫຍດສ່ວນລວມ ສູງກວ່າຜົນປະໂຫຍດສ່ວນຕົວ;
8. ຮັກສາຄວາມລັບຂອງປະເທດຊາດ ແລະ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຢ່າງເດັດຂາດ;
9. ປະຕິບັດຫລັກການລວມສູນປະຊາທິປະໄຕ, ສ້າງຄວາມສາມັກຄີເປັນເອກະພາບພາຍໃນ, ຕິຊົມຕົນເອງ ແລະ ຕິຊົມກັນ ເພື່ອພ້ອມກັນກ້າວໜ້າ; ເຄົາລົບນັບຖືວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ;

10. ເກັບກຳ, ຄົ້ນຄວ້າ, ຕີລາຄາ, ຄາດຄະເນ ສະພາບການ ເພື່ອນຳສະເໜີຕໍ່ຂັ້ນເທິງ ແລ້ວວາງທິດທາງ ຈັດຕັ້ງປະຕິບັດ;
11. ຄົ້ນຄວ້າວິທະຍາສາດ, ກົດໝາຍ, ສະຫລຸບຖອດຖອນບົດຮຽນ, ສັງລວມພຶດຕິກຳກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;
12. ຄຸ້ມຄອງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງ ນາຍ ແລະ ພົນຕຳຫລວດ ບົນພື້ນຖານຍົກສູງຈິດໃຈເພິ່ງຕົນເອງກຸ້ມຕົນເອງ ແລະ ອອກແຮງສ້າງພະລາທິການກັບທີ່ ຕິດພັນກັບວຽກງານວິຊາສະເພາະ;
13. ປະສານສົມທົບຢ່າງກົມກຽວ ລະຫວ່າງຍຸດທະສາດປ້ອງກັນຄວາມສະຫງົບແຫ່ງຊາດ ກັບການພັດທະນາເສດຖະກິດ-ສັງຄົມ; ຮ່ວມມື ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ເປັນຕົ້ນ ຂະແໜງການ ປ້ອງກັນຊາດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ສາທາລະນະສຸກ, ການຕ່າງປະເທດ ແລະ ອົງການປົກຄອງທ້ອງຖິ່ນ ໃນວຽກງານປ້ອງກັນຄວາມສະຫງົບ;
14. ກໍ່ສ້າງຮາກຖານການເມືອງ, ເຂົ້າຮ່ວມການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຊ່ວຍເຫລືອປະຊາຊົນລາວບັນດາເຜົ່າ;
15. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 11. ຂອບເຂດສິດ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນອາຊີບ ມີສິດດັ່ງນີ້:

1. ກວດກາການເຄົາລົບ ແລະ ການປະຕິບັດກົດໝາຍໃນສັງຄົມ ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຊີວິດ, ຊັບສິນ, ຜົນປະໂຫຍດ ຂອງລັດ ແລະ ລວມໝູ່ , ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;
2. ຈັດຕັ້ງ, ວາງກຳລັງຢູ່ໃນພື້ນທີ່, ຂົງເຂດ, ຂະແໜງການທີ່ເຫັນວ່າຈຳເປັນ;
3. ຊອກຮູ້, ເກັບກຳ, ຄົ້ນຄວ້າ-ວິໃຈ, ນຳໃຊ້ຂໍ້ມູນຂ່າວສານ ທີ່ກ່ຽວພັນກັບວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
4. ທວງໃຫ້ການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນຂ່າວສານທີ່ ພົວພັນເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງປະເທດຊາດ;
5. ອອກຄຳສັ່ງໂຈະ ຫລື ໃຫ້ຢຸດເຊົາຊົ່ວຄາວ ການເຄື່ອນໄຫວຂອງການຈັດຕັ້ງ ຫລື ບຸກຄົນທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງປະເທດຊາດ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃນກໍລະນີຈຳເປັນຮີບດ່ວນ ແລ້ວນຳສະເໜີຂັ້ນເທິງໃຫ້ທິດຊີ້ນຳ;
6. ປະກອບ ແລະນຳໃຊ້ອາວຸດ, ຍານພາຫະນະ, ເຄື່ອງມື, ອຸປະກອນເຕັກນິກວິຊາສະເພາະຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບວາງອອກ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ;

7. ສືບສວນ-ສອບສວນຄະດີອາຍາ, ນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນ: ການກັກຕົວ, ການຈັບຕົວ, ການປ່ອຍຕົວ, ການກວດຄົ້ນ, ການຍຶດ ຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
8. ຮ່ຳຮຽນ, ຍົກລະດັບ, ຮັບຕຳແໜ່ງໜ້າທີ່, ປະດັບຊັ້ນ, ເລື່ອນຊັ້ນ, ຮັບນະໂຍບາຍຕ່າງໆ ຕາມລະບຽບ ກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
9. ເຂົ້າຮ່ວມທຸກການເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການຕ່າງປະເທດ ຕາມລະບຽບການ;
10. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 12. **ຄວາມຮັບຜິດຊອບ**

ຄວາມຮັບຜິດຊອບຂອງນາຍ ແລະພົນຕຳຫລວດ ມີດັ່ງນີ້:
1. ນາຍຕຳຫລວດມີຄວາມຮັບຜິດຊອບນຳພາ, ຊີ້ນຳ, ບັນຊາ, ຄຸ້ມຄອງກົມກອງ, ເຫລົ່າລົບວິຊາສະເພາະ ທັງຈັດຕັ້ງປະຕິບັດວຽກງານຕົວຈິງ ໃນຄວາມຮັບຜິດຊອບຂອງຕົນ;
2. ພົນຕຳຫລວດ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຕາມການນຳພາ, ຊີ້ນຳ, ບັນຊາ ຂອງຂັ້ນເທິງ ຢ່າງເຂັ້ມງວດ;
3. ນາຍ ແລະ ພົນຕຳຫລວດ ລ້ວນແຕ່ມີຄວາມຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງຂອງຕົນ ໃນການປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ.

ມາດຕາ 13. **ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະຄວາມຮັບຜິດຊອບຂອງກຳລັງ ເຄິ່ງອາຊີບປ້ອງກັນຄວາມສະຫງົບ**

ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງກຳລັງເຄິ່ງອາຊີບປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ III
## ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ມາດຕາ 14. **ໂຄງປະກອບການຈັດຕັ້ງ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີໂຄງປະກອບການຈັດຕັ້ງດັ່ງນີ້:
- ກະຊວງປ້ອງກັນຄວາມສະຫງົບ;
- ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ;
- ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ;
- ປກສ ບ້ານ.

ສຳລັບການຈັດຕັ້ງລະອຽດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 15. ໂຄງປະກອບບຸກຄະລາກອນຂັ້ນນຳພາ, ບັນຊາ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີໂຄງປະກອບບຸກຄະລາກອນຂັ້ນນຳພາ, ບັນຊາ ດັ່ງນີ້:

ກະຊວງປ້ອງກັນຄວາມສະຫງົບມີ ລັດຖະມົນຕີວ່າການ, ລັດຖະມົນຕີຊ່ວຍວ່າການ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການ, ຫົວໜ້າ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ແລະອື່ນໆ.

ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ມີ ຫົວໜ້າ ແລະ ຮອງຫົວໜ້າ.

ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ ມີ ຫົວໜ້າ ແລະ ຮອງຫົວໜ້າ.

ປກສ ບ້ານ ມີ ຫົວໜ້າ ແລະ ຮອງຫົວໜ້າ.

**ມາດຕາ 16. ສິດ ແລະໜ້າທີ່ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ**

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະໜ້າທີ່ດັ່ງນີ້:

1. ນຳພາ, ຊີ້ນຳການຜັນຂະຫຍາຍ ແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ລະບຽບກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ເປັນແຜນການ, ແຜນງານ ຂອງຕົນແລ້ວຈັດຕັ້ງປະຕິບັດ;
2. ຄຸ້ມຄອງ, ບັນຊາ, ກວດກາ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
3. ສະເໜີສ້າງ ຫລື ປັບປຸງກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໃນຂະແໜງການຂອງຕົນ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງ ແລະການເຄື່ອນໄຫວວຽກງານ ໃນຂະແໜງການຂອງຕົນ ໃຫ້ມີປະສິດທິພາບ;
5. ໂຈະການປະຕິບັດ, ລົບລ້າງ ຫລື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫລື ແຈ້ງການທີ່ຂັດກັບລະບຽບກົດໝາຍ ຂອງການຈັດຕັ້ງຂັ້ນລຸ່ມທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ;
6. ສະເໜີນາຍົກລັດຖະມົນຕີ ເພື່ອໂຈະການປະຕິບັດ, ດັດແປງ, ລົບລ້າງ ຫລື ຍົກເລີກນິຕິກຳຂອງຂະແໜງການອື່ນ ຫລື ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບນິຕິກຳຂອງກະຊວງຕົນ ຫລື ກໍ່ຄວາມເສຍຫາຍໃຫ້ແກ່ຄວາມສະຫງົບຂອງປະເທດຊາດ;
7. ປະສານສົມທົບກັບຂະແໜງການຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດວຽກງານຂອງຂະແໜງການຕົນ;
8. ພົວພັນ, ຮ່ວມມື, ເຊັນສັນຍາ ແລະ ອະນຸສັນຍາກັບຕ່າງປະເທດ ຕາມການມອບໝາຍຂອງລັດຖະບານ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ ຫລື ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ**

ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະໜ້າທີ່ດັ່ງນີ້:

1. ເປັນຜູ້ຊ່ວຍລັດຖະມົນຕີວ່າການໃນການນໍາພາ, ຊີ້ນໍາ, ບັນຊາວຽກງານລວມຂອງກະຊວງປ້ອງກັນຄວາມສະຫງົບ;
2. ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີວ່າການ;
3. ໃນກໍລະນີທີ່ລັດຖະມົນຕີວ່າການ ບໍ່ຢູ່ ຫລື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນລັດຖະມົນຕີຊ່ວຍວ່າການ ຜູ້ທີ່ໄດ້ຮັບມອບໝາຍຈາກລັດຖະມົນຕີວ່າການ ເປັນຜູ້ວ່າການແທນ.

ມາດຕາ 18. **ສິດ ແລະໜ້າທີ່ຂອງຫົວໜ້າ ແລະຮອງຫົວໜ້າ ການຈັດຕັ້ງຂັ້ນຕ່າງໆ**

ສິດ ແລະ ໜ້າທີ່ຂອງຫົວໜ້າ ແລະ ຮອງຫົວໜ້າ ການຈັດຕັ້ງຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນຂັ້ນຕ່າງໆ ທີ່ໄດ້ບົ່ງໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ໝວດທີ IV
## ປະເພດ, ແຫລ່ງທີ່ມາ, ມາດຕະຖານ ແລະ ການກໍ່ສ້າງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

ມາດຕາ 19. **ປະເພດຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ**

ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ແບ່ງອອກເປັນປະເພດຕາມວິຊາສະເພາະດັ່ງນີ້:

1. ກໍາລັງຕໍາຫລວດສັນຕິບານ ຊຶ່ງເຮັດໜ້າທີ່ປ້ອງກັນ, ສະກັດກັ້ນ, ຕໍ່ສູ້, ທັບມ້າງທຸກກົນອຸບາຍ ແລະ ການເຄື່ອນໄຫວທໍາລາຍຄວາມໝັ້ນຄົງຂອງປະເທດຊາດ;
2. ກໍາລັງວິຊາສະເພາະຕໍາຫລວດ ຊຶ່ງເຮັດໜ້າທີ່ປ້ອງກັນ, ສະກັດກັ້ນ, ຕ້ານອາຊະຍາກໍາ, ຄຸ້ມຄອງພົນລະເມືອງ, ການຈະລາຈອນ, ກັນ ແລະ ສະກັດກັ້ນອັກຄີໄພ, ດໍາເນີນຄະດີອາຍາ ເພື່ອປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ກໍາລັງວິຊາສະເພາະການເມືອງ ຊຶ່ງເຮັດໜ້າທີ່ວຽກງານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ນະໂຍບາຍ, ການກໍ່ສ້າງ, ພັດທະນາກໍາລັງ ແລະ ວຽກງານອົງການຈັດຕັ້ງມະຫາຊົນ;
4. ກໍາລັງວິຊາສະເພາະເສນາທິການ ຊຶ່ງເຮັດໜ້າທີ່ຄົ້ນຄວ້າວາງແຜນຍຸດທະສາດ, ວິທະຍາສາດ, ກົດໝາຍ, ກວດກາການປະຕິບັດລະບຽບກົດໝາຍ, ນິຕິກໍາອື່ນໆ ໃນກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ເຮັດໜ້າທີ່ວຽກງານບໍລິຫານ;
5. ກໍາລັງວິຊາສະເພາະພະລາທິການ ຊຶ່ງເຮັດໜ້າທີ່ຮັບປະກັນທາງດ້ານພະລາທິການ ແລະ ການລ້ຽງດູກໍາລັງ;
6. ກໍາລັງເຄິ່ງອາຊີບປ້ອງກັນຄວາມສະຫງົບ ຊຶ່ງເຮັດໜ້າທີ່ຮັກສາຄວາມສະຫງົບຢູ່ຮາກຖານບ້ານ, ສໍານັກງານ, ອົງການ, ຫົວໜ່ວຍທຸລະກິດ ແລະອື່ນໆ.

### ມາດຕາ 20. ແຫລ່ງທີ່ມາຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີແຫລ່ງທີ່ມາດັ່ງນີ້:

1. ພົນລະເມືອງລາວບັນດາເຜົ່າ ທີ່ໄດ້ສະໝັກ ແລະ ສອບເສັງ ຄັດເລືອກເຂົ້າເປັນກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
2. ນັກຮຽນ, ນັກສຶກສາ ທີ່ໄດ້ຮຽນຈົບວິຊາຊີບໃດໜຶ່ງ ໂດຍມີເງື່ອນໄຂຄົບຖ້ວນ;
3. ພະນັກງານ-ລັດຖະກອນ ທີ່ໄດ້ຮັບການຄັດເລືອກມາຈາກອົງການຈັດຕັ້ງຂອງພັກ ແລະ ລັດ.

### ມາດຕາ 21. ມາດຕະຖານຂອງນາຍ ແລະ ພົນຕຳຫລວດ

ນາຍ ແລະ ພົນຕຳຫລວດ ມີມາດຕະຖານດັ່ງນີ້:

1. ຕ້ອງເປັນຄົນລາວຖືສັນຊາດລາວ ມີອາຍຸແຕ່ 18 ປີ ຂຶ້ນໄປ;
2. ມີທັດສະນະຫລັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກ-ລັດ ແລະ ປະຊາຊົນ, ມີອຸດົມການສັງຄົມນິຍົມ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ຈຳແນກໄດ້ມິດ-ສັດຕູ, ມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈກ້າຫານເສຍສະລະ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ;
3. ມີປະກາສະນີຍະບັດມັດທະຍົມຕອນປາຍ, ວິຊາຊີບໃດໜຶ່ງ, ມີຊີວະປະຫວັດດີ;

   ສຳລັບພົນລະເມືອງລາວ ທີ່ຢູ່ຊົນນະບົດຫ່າງໄກສອກຫລີກ ຊຶ່ງບໍ່ມີປະກາສະນີຍະບັດມັດທະຍົມຕອນປາຍ ກໍຈະໄດ້ຮັບການພິຈາລະນາເຊັ່ນດຽວກັນ;
4. ມີຄວາມຮູ້ພື້ນຖານດ້ານແນວທາງນະໂຍບາຍຂອງພັກ, ວິຊາສະເພາະ ແລະ ພາສາຕ່າງປະເທດໃດໜຶ່ງ;
5. ມີສຸຂະພາບແຂງແຮງ, ຮ່າງກາຍສົມບູນ.

ສຳລັບນາຍຕຳຫລວດ ຕ້ອງມີເງື່ອນໄຂຕື່ມດັ່ງນີ້:

- ຂັ້ນນາຍຮ້ອຍ ຕ້ອງມີປະກາສະນີຍະບັດວິຊາສະເພາະຂັ້ນກາງຂຶ້ນໄປ ຫລື ໄດ້ຜ່ານປະສົບການດ້ານ ການນຳພາ, ຊີ້ນຳ, ບັນຊາ ແລະ ມີຜົນສຳເລັດໃນວຽກງານຕົວຈິງ;
- ຂັ້ນນາຍພັນ ຕ້ອງມີປະກາສະນີຍະບັດວິຊາສະເພາະຂັ້ນສູງຂຶ້ນໄປ ແລະ ມີປະກາສະນີຍະບັດດ້ານທິດສະດີ ການເມືອງ-ການປົກຄອງ ຂັ້ນກາງ ຫລື ທຽບເທົ່າຂຶ້ນໄປ.

ຂັ້ນນາຍຮ້ອຍ ແລະ ຂັ້ນນາຍພັນ ທີ່ກ່າວເທິງນີ້ ຕ້ອງມີຄວາມສາມາດໃນການນຳພາ, ຊີ້ນຳ, ບັນຊາ, ມີຄວາມຕື່ນຕົວທາງການເມືອງສູງ, ມີຄວາມເປັນແບບຢ່າງນຳໜ້າ ແລະ ມີບົດບາດອິດທິພົນຕໍ່ພະນັກງານນັກຮົບ.

### ມາດຕາ 22. ການກໍ່ສ້າງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ການກໍ່ສ້າງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ດັ່ງນີ້:

1. ຄະນະພັກ, ຄະນະບັນຊາຂັ້ນຕ່າງໆ ຂອງກະຊວງປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບກໍ່ສ້າງກຳລັງຂອງຕົນໃຫ້ເຕີບໃຫຍ່, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ,

ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ແບບແຜນວິທີເຮັດວຽກທີ່ນັບມື້ກ້າວໜ້າ ແລະ ທັນສະໄໝ, ມີຄວາມຊຳນິຊຳນານທາງດ້ານວິຊາສະເພາະ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ;

2. ອົງການຈັດຕັ້ງຂອງພັກ-ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງລາວ ມີພັນທະປະກອບສ່ວນກໍ່ສ້າງ, ບຳລຸງ ແລະ ສຶກສາອົບຮົມກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

## ໝວດທີ V
## ລະບົບຂັ້ນ ແລະ ຊັ້ນ ຂອງນາຍ ແລະ ພົນຕຳຫລວດ

**ມາດຕາ 23. ຂັ້ນ ແລະ ຊັ້ນ ຂອງນາຍ ແລະ ພົນຕຳຫລວດ**

ນາຍ ແລະ ພົນຕຳຫລວດ ປະກອບມີ 5 ຂັ້ນ ແລະ 16 ຊັ້ນດັ່ງນີ້:

1. ຂັ້ນນັກຮົບ ມີ 2 ຊັ້ນ:
   ຊັ້ນ ສອງ;
   ຊັ້ນ ໜຶ່ງ.
2. ຂັ້ນນາຍສິບ ມີ 4 ຊັ້ນ:
   ຊັ້ນ ສິບຕີ;
   ຊັ້ນ ສິບໂທ;
   ຊັ້ນ ສິບເອກ;
   ຊັ້ນ ວາທີຮ້ອຍຕີ.
3. ຂັ້ນນາຍຮ້ອຍ ມີ 3 ຊັ້ນ:
   ຊັ້ນ ຮ້ອຍຕີ;
   ຊັ້ນ ຮ້ອຍໂທ;
   ຊັ້ນ ຮ້ອຍເອກ.
4. ຂັ້ນນາຍພັນ ມີ 3 ຊັ້ນ:
   ຊັ້ນ ພັນຕີ;
   ຊັ້ນ ພັນໂທ;
   ຊັ້ນ ພັນເອກ.
5. ຂັ້ນນາຍພົນ ມີ 4 ຊັ້ນ:
   ຊັ້ນ ພົນຈັດຕະວາ;
   ຊັ້ນ ພົນຕີ;
   ຊັ້ນ ພົນໂທ;
   ຊັ້ນ ພົນເອກ.

## ມາດຕາ 24. ອາຍຸກະສຽນຂອງນາຍ ແລະພົນຕຳຫລວດ

ອາຍຸກະສຽນຂອງນາຍ ແລະພົນຕຳຫລວດ ມີດັ່ງນີ້:

**1. ອາຍຸກະສຽນປະດັບຊັ້ນ ແລະເລື່ອນຊັ້ນ:**

| | |
|---|---|
| ຊັ້ນນັກຮົບ | ອາຍຸບໍ່ໃຫ້ເກີນ 20 ປີ; |
| ຊັ້ນນາຍສິບ | ອາຍຸບໍ່ໃຫ້ເກີນ 30 ປີ; |
| ຊັ້ນນາຍຮ້ອຍ | ອາຍຸບໍ່ໃຫ້ເກີນ 40 ປີ; |
| ຊັ້ນນາຍພັນ | ອາຍຸບໍ່ໃຫ້ເກີນ 50 ປີ; |
| ຊັ້ນນາຍພົນ | ອາຍຸບໍ່ໃຫ້ເກີນ 60 ປີ. |

**2. ອາຍຸກະສຽນປະຈຳການ:**

ອາຍຸກະສຽນຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ປະຈຳການຢູ່ກະຊວງ, ກົມກອງວິຊາສະເພາະ, ກອງບັນຊາການຕ່າງໆ ຕໍ່າສຸດບໍ່ໃຫ້ຫລຸດ 18 ປີ ແລະ ສູງສຸດບໍ່ໃຫ້ເກີນ 65 ປີ.

**3. ອາຍຸກະສຽນຮັບບຳນານ:**

ອາຍຸກະສຽນຮັບບຳນານຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພດຊາຍແມ່ນ 60 ປີ ແລະ ມີອາຍຸການ 25 ປີ, ໃນກໍລະນີພິເສດທີ່ມີຄວາມຮຽກຮ້ອງຕ້ອງການ ບໍ່ໃຫ້ເກີນ 65 ປີ; ເພດຍິງແມ່ນ 55 ປີ ແລະ ມີອາຍຸການ 20 ປີ, ໃນກໍລະນີພິເສດທີ່ມີຄວາມຮຽກຮ້ອງຕ້ອງການ ບໍ່ໃຫ້ເກີນ 60 ປີ. ສຳລັບຜູ້ທີ່ເຮັດວຽກກັບ ທາດເບື່ອ, ທາດເຄມີ ຫລື ເຮັດວຽກຢູ່ເຂດຫຍຸ້ງຍາກທຸລະກັນດານເປັນເວລາ 15 ປີ ຢ່າງຕໍ່ເນື່ອງມີສິດໄດ້ຮັບບຳນານກ່ອນກຳນົດ.

## ມາດຕາ 25. ການປະດັບຊັ້ນໃຫ້ນາຍ ແລະພົນຕຳຫລວດ

ການປະດັບຊັ້ນໃຫ້ນາຍ ແລະພົນຕຳຫລວດ ປະຕິບັດດັ່ງນີ້:

1. ນັກຮຽນ ທີ່ຮຽນຈົບຈາກໂຮງຮຽນນາຍສິບ ຈະໄດ້ຮັບການປະດັບຊັ້ນສິບໂທ, ຖ້າຫາກເສັງບໍ່ຜ່ານ ຈະໄດ້ຮັບການປະດັບຊັ້ນສິບຕີ;
2. ນັກຮຽນ ທີ່ຮຽນຈົບຈາກໂຮງຮຽນນາຍຕຳຫລວດຊັ້ນກາງ ຈະໄດ້ຮັບການປະດັບຊັ້ນຮ້ອຍຕີ, ຖ້າຫາກເສັງບໍ່ຜ່ານ ຈະໄດ້ຮັບການປະດັບຊັ້ນວາທີຮ້ອຍຕີ;
3. ນັກສຶກສາ ທີ່ຮຽນຈົບຈາກໂຮງຮຽນນາຍຕຳຫລວດ ຂັ້ນປະລິນຍາຕີ ຈະໄດ້ຮັບການປະດັບຊັ້ນຮ້ອຍໂທ, ຖ້າຫາກເສັງບໍ່ຜ່ານ ຈະໄດ້ຮັບການປະດັບຊັ້ນຮ້ອຍຕີ;
4. ນັກສຶກສາ ທີ່ຮຽນຈົບຈາກໂຮງຮຽນນາຍຕຳຫລວດ ຂັ້ນປະລິນຍາໂທຂຶ້ນໄປ ຈະໄດ້ຮັບການປະດັບຊັ້ນຮ້ອຍເອກຂຶ້ນໄປ.

ພະນັກງານ, ລັດຖະກອນ ແລະ ນັກຮຽນ, ນັກສຶກສາ ທີ່ໄດ້ຮັບການຄັດເລືອກເຂົ້າໃນກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈະໄດ້ຮັບການປະດັບຊັ້ນ ຕາມລະບຽບການສະເພາະ.

ພະນັກງານທີ່ຍົກຍ້າຍມາແຕ່ອົງການປົກຄອງ ຕາມຄວາມຕ້ອງການຂອງກະຊວງປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການປະດັບຊັ້ນຕາມລະບຽບທຽບຊັ້ນ ແລະ ຕາມການມອບໝາຍຕຳແໜ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງກົດໝາຍສະບັບນີ້;

ສຳລັບຕຳແໜ່ງລັດຖະມົນຕີວ່າການ ທີ່ຍົກຍ້າຍມາຈາກອົງການປົກຄອງນັ້ນ ບໍ່ໄດ້ຮັບການປະດັບຊັ້ນ.

**ມາດຕາ 26. ສິດຕົກລົງກ່ຽວກັບຊັ້ນຂອງນາຍ ແລະພົນຕຳຫລວດ**

ສິດໃນການຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນ ນາຍ ແລະພົນຕຳຫລວດ ມີດັ່ງນີ້:

1. ປະທານປະເທດ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຂັ້ນນາຍພົນ ຕາມການສະເໜີຂອງນາຍົກລັດຖະມົນຕີ;
2. ນາຍົກລັດຖະມົນຕີ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຂັ້ນນາຍພັນເອກ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ;
3. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຂັ້ນນາຍຮ້ອຍເອກ, ພັນຕີ ແລະ ພັນໂທ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ;
4. ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຂັ້ນນາຍຮ້ອຍຕີ ແລະ ຮ້ອຍໂທ ຕາມການສະເໜີຂອງກົມກ່ຽວຂ້ອງ;
5. ຫົວໜ້າ ກົມໃຫຍ່, ຫ້ອງວ່າການກະຊວງ, ກົມ, ກອງບັນຊາການ, ຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ, ກອງບັນຊາການ ປກສ ແຂວງ, ນະຄອນ ເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະ ປົດຊັ້ນ ຂັ້ນວາທີຮ້ອຍຕີລົງມາເຖິງພົນຕຳຫລວດຊັ້ນສອງ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

**ມາດຕາ 27. ເງື່ອນໄຂການເລື່ອນຊັ້ນນາຍ ແລະພົນຕຳຫລວດ**

ການເລື່ອນຊັ້ນນາຍ ແລະພົນຕຳຫລວດ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ເຖິງກຳນົດເວລາການເລື່ອນຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້;
2. ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະ ຫລື ມີຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານອື່ນໆ;
3. ມີມາດຕະຖານ ແລະ ອາຍຸກະສຽນ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ແລະ 24 ຂອງ ກົດໝາຍສະບັບນີ້.

**ມາດຕາ 28. ກຳນົດເວລາການເລື່ອນຊັ້ນນາຍ ແລະພົນຕຳຫລວດ**

ການພິຈາລະນາການເລື່ອນຊັ້ນນາຍ ແລະພົນຕຳຫລວດ ໃຫ້ປະຕິບັດຕາມກຳນົດເວລາດັ່ງນີ້:

| | |
|---|---|
| ຊັ້ນ 2 ຂຶ້ນ ຊັ້ນ 1 | ກຳນົດ 1 ປີ; |
| ຊັ້ນ 1 ຂຶ້ນ ສິບຕີ; | ກຳນົດ 1 ປີ; |
| ຊັ້ນສິບຕີ ຂຶ້ນ ສິບໂທ | ກຳນົດ 1 ປີ; |
| ຊັ້ນສິບໂທ ຂຶ້ນ ສິບເອກ | ກຳນົດ 1 ປີ; |
| ຊັ້ນສິບເອກ ຂຶ້ນ ວາທີຮ້ອຍຕີ | ກຳນົດ 2 ປີ; |

ຊັ້ນວາທີຮ້ອຍຕີ ຂຶ້ນ ຮ້ອຍຕີ ກຳນົດ 2 ປີ;
ຊັ້ນຮ້ອຍຕີ ຂຶ້ນ ຮ້ອຍໂທ ກຳນົດ 3 ປີ;
ຊັ້ນຮ້ອຍໂທ ຂຶ້ນ ຮ້ອຍເອກ ກຳນົດ 3 ປີ;
ຊັ້ນຮ້ອຍເອກ ຂຶ້ນ ພັນຕີ ກຳນົດ 4 ປີ;
ຊັ້ນພັນຕີ ຂຶ້ນ ພັນໂທ ກຳນົດ 4 ປີ;
ຊັ້ນພັນໂທ ຂຶ້ນ ພັນເອກ ກຳນົດ 4 ປີ.

ສ່ວນການເລື່ອນຊັ້ນພັນເອກຂຶ້ນນາຍພົນ ແລະ ນາຍພົນຂຶ້ນນາຍພົນຕາມລະດັບຊັ້ນນັ້ນ ແມ່ນບໍ່ມີກຳນົດເວລາ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ.

ໄລຍະເວລາທີ່ນາຍ ແລະ ພົນຕຳຫລວດ ຮ່ຳຮຽນ ຫລື ສຶກສາ ຢູ່ນັ້ນ ໃຫ້ຄິດໄລ່ໃສ່ກຳນົດເວລາການເລື່ອນຊັ້ນຕາມມາດຕານີ້.

ນາຍ ແລະ ພົນຕຳຫລວດ ທີ່ມີຜົນງານດີເດັ່ນພິເສດໃນການປະຕິບັດໜ້າທີ່ວິຊາສະເພາະ ທີ່ຂັ້ນເທິງມອບໝາຍໃຫ້ ຈະໄດ້ເລື່ອນຂ້າມຊັ້ນ; ມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານ, ຄົ້ນຄວ້າວິທະຍາສາດ, ກົດໝາຍ, ການຮ່ຳຮຽນ ກໍຈະໄດ້ຮັບການພິຈາລະນາເລື່ອນຊັ້ນກ່ອນກຳນົດ.

ໃນກໍລະນີທີ່ຮອດກຳນົດເວລາການເລື່ອນຊັ້ນ ທີ່ໄດ້ກຳນົດໄວ້ໃນ ມາດຕານີ້ ແຕ່ຫາກບໍ່ຄົບມາດຕະຖານ ແລະ ເງື່ອນໄຂ ກໍຈະບໍ່ທັນໄດ້ເລື່ອນຊັ້ນ ແຕ່ຈະມີການພິຈາລະນາໄປແຕ່ລະປີ ໂດຍບໍ່ໃຫ້ເກີນໜຶ່ງຮອບຂອງກຳນົດເວລາການເລື່ອນຂອງແຕ່ລະຊັ້ນ ຫລື ອາດຈະຍົກຍ້າຍຜູ້ກ່ຽວ ໄປເຮັດໜ້າທີ່ໃໝ່ຕາມຄວາມອາດສາມາດ ຫລື ຮັບບຳນານ ຫລື ອຸດໜູນຕາມລະບຽບການ.

ນາຍ ແລະ ພົນຕຳຫລວດ ທີ່ຖືກຍົກຍ້າຍໄປປະຕິບັດໜ້າທີ່ຢູ່ຝ່າຍປົກຄອງ ເມື່ອກັບຄືນກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈະໄດ້ຮັບການພິຈາລະນາກ່ຽວກັບຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້, ມາດຕາ 27 ແລະ 30 ຂອງກົດໝາຍສະບັບນີ້.

## ໝວດທີ VI
## ຕຳແໜ່ງຂອງນາຍ ແລະພົນຕຳຫລວດ

### ມາດຕາ 29. ຕຳແໜ່ງຂອງນາຍ ແລະພົນຕຳຫລວດ

ຕຳແໜ່ງຂອງນາຍ ແລະ ພົນຕຳຫລວດ ແບ່ງອອກເປັນສາມຂັ້ນ ດັ່ງນີ້:

**ກະຊວງປ້ອງກັນຄວາມສະຫງົບ:**

1. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ;
2. ຫົວໜ້າກົມໃຫຍ່, ຫ້ອງວ່າການກະຊວງ, ກົມ, ກອງບັນຊາການ ແລະຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ;
3. ຫົວໜ້າ ຫ້ອງການ, ກົມ, ຫ້ອງທຽບເທົ່າກົມ ແລະໂຮງຮຽນ ທີ່ຂຶ້ນກັບກົມໃຫຍ່;
4. ຫົວໜ້າ ພະແນກ ແລະກອງວິຊາສະເພາະ.

**ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ:**

1. ຫົວໜ້າ ກອງບັນຊາການ ປກສ ແຂວງ, ນະຄອນ;

2. ຫົວໜ້າ ຫ້ອງການ, ຫ້ອງວິຊາສະເພາະ ແລະໂຮງຮຽນ;

3. ຫົວໜ້າ ພະແນກ ແລະກອງວິຊາສະເພາະ.

**ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ:**

1. ຫົວໜ້າ ກອງບັນຊາການ ປກສ ເມືອງ, ເທດສະບານ;

2. ຫົວໜ້າ ຫ້ອງການ, ພະແນກວິຊາສະເພາະ ແລະ ປກສ ກຸ່ມບ້ານ.

ສໍາລັບຫົວໜ້າກອງພັນ, ກອງຮ້ອຍ, ໝວດ, ໝູ່ ມີລະບຽບການສະເພາະ.

ນອກຈາກຕໍາແໜ່ງຕ່າງໆ ທີ່ກ່າວມາຂ້າງເທິງນີ້ ຍັງມີຕໍາແໜ່ງຫຼຽບເທົ່າ ແລະ ຕໍາແໜ່ງຮອງຫົວໜ້າອີກ.

**ມາດຕາ 30. ການກໍານົດຊັ້ນໃສ່ຕໍາແໜ່ງຂອງຜູ້ບັນຊາແຕ່ລະຂັ້ນ**

ການກໍານົດຊັ້ນໃສ່ແຕ່ລະຕໍາແໜ່ງຂອງຜູ້ບັນຊາແຕ່ລະຂັ້ນ ໃຫ້ປະຕິບັດດັ່ງນີ້:

**ກະຊວງປ້ອງກັນຄວາມສະຫງົບ:**

1. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ: ຊັ້ນພົນຕີ ຂຶ້ນໄປ;
2. ຫົວໜ້າກົມໃຫຍ່, ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ, ກົມ, ກອງບັນຊາການ ແລະ ຜູ້ອໍານວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ: ຊັ້ນພັນເອກ ຫລື ຊັ້ນພົນຈັດຕະວາ;
3. ຫົວໜ້າ ຫ້ອງການ, ກົມ, ຫ້ອງຫຽບເທົ່າກົມ ແລະໂຮງຮຽນ ທີ່ຂຶ້ນກັບກົມໃຫຍ່: ຊັ້ນພັນໂທ ຫລື ພັນເອກ;
4. ຫົວໜ້າພະແນກ, ກອງວິຊາສະເພາະທີ່ຂຶ້ນກັບກົມ, ກອງບັນຊາການ ແລະ ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ: ຊັ້ນພັນຕີ ຫລື ພັນໂທ;
5. ຫົວໜ້າພະແນກ ແລະ ກອງວິຊາສະເພາະ ຂອງກົມທີ່ຂຶ້ນກັບກົມໃຫຍ່: ຊັ້ນຮ້ອຍເອກ ຫລື ພັນຕີ;

**ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ:**

1. ຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນ: ຊັ້ນພັນໂທ ຫລື ພັນເອກ;
2. ຫົວໜ້າ ຫ້ອງການ, ຫ້ອງວິຊາສະເພາະ ແລະ ໂຮງຮຽນ: ຊັ້ນພັນຕີ ຫລື ພັນໂທ;
3. ຫົວໜ້າພະແນກ ແລະ ກອງວິຊາສະເພາະ : ຊັ້ນຮ້ອຍເອກ ຫລື ພັນຕີ.

**ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ:**

1. ຫົວໜ້າ ກອງບັນຊາການ ປກສ ເມືອງ, ເທດສະບານ: ຊັ້ນພັນຕີ ຫລື ພັນໂທ;
2. ຫົວໜ້າ ຫ້ອງການ, ພະແນກວິຊາສະເພາະ ແລະ ປກສ ກຸ່ມບ້ານ: ຊັ້ນຮ້ອຍໂທ, ຮ້ອຍເອກ ຫລື ພັນຕີ.

ຊັ້ນຂອງຮອງຫົວໜ້າແຕ່ລະຂັ້ນ ອາດຈະຫລຸດ ຫລື ເທົ່າກັບຊັ້ນຂອງຜູ້ເປັນຫົວໜ້າກໍໄດ້.

ສໍາລັບຊັ້ນຫົວໜ້າ, ຮອງຫົວໜ້າກອງພັນ, ກອງຮ້ອຍ, ໝວດ, ໝູ່ ມີລະບຽບການສະເພາະ.

ຊັ້ນຂອງນາຍ ແລະ ພົນຕໍາຫລວດທີ່ເຮັດວຽກງານພິເສດ, ຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະສູງກວ່າຊັ້ນທີ່ໄດ້ກໍານົດໄວ້ເທິງນີ້ກໍໄດ້ ແຕ່ບໍ່ໃຫ້ກາຍໜຶ່ງຊັ້ນ.

**ມາດຕາ 31. ການແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງ ຂອງນາຍ ແລະ ພົນຕຳຫລວດ**

ການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຂອງນາຍ ແລະ ພົນຕຳຫລວດ ມີດັ່ງນີ້:

1. ປະທານປະເທດ ເປັນຜູ້ແຕ່ງຕັ້ງ ຫລື ປົດຕຳແໜ່ງ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫລັງທີ່ສະພາແຫ່ງຊາດຮັບຮອງເອົາ;
2. ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນຄວາມສະຫງົບ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່, ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມ, ຫົວໜ້າກອງບັນຊາການ, ຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ;
3. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ:

   - ຂັ້ນກະຊວງ: ຮອງຫົວໜ້າກົມ, ຮອງຫົວໜ້າກອງບັນຊາການ, ຮອງຜູ້ອຳນວຍການວິທະຍາຄານ ປ້ອງກັນຄວາມສະຫງົບແຫ່ງຊາດ, ຫົວໜ້າ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງຫຼຸບເທົ່າກົມທີ່ຂຶ້ນກັບກົມໃຫຍ່;
   - ຂັ້ນແຂວງ ແລະ ເມືອງ: ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງ, ກອງພັນ, ກອງຮ້ອຍເອກະລາດ, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການ ປກສ ເມືອງ, ເທດສະບານ, ຫົວໜ້າ ແລະ ຮອງຫົວໜ້າໂຮງຮຽນ ປກສ ຂັ້ນກາງ;
4. ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງ, ພະແນກ ທີ່ຂຶ້ນກັບກົມ ແລະ ວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງ, ກອງພັນ, ກອງຮ້ອຍ ຂອງກອງບັນຊາການ, ຫົວໜ້າ ແລະ ຮອງຫົວໜ້າກອງວິຊາສະເພາະ, ຫົວໜ້າ ແລະ ຮອງຫົວໜ້າກອງຮ້ອຍ, ຫົວໜ້າ ແລະ ຮອງຫົວໜ້າໂຮງຮຽນ ປກສ ຂັ້ນຕົ້ນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;
5. ຫົວໜ້າກົມໃຫຍ່, ຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມ, ຜູ້ອຳນວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ, ຫົວໜ້າກອງບັນຊາການ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຫົວໜ້າ ແລະ ຮອງຫົວໜ້າພະແນກຂອງກົມ ຫລື ຫ້ອງຫຼຸບເທົ່າທີ່ຂຶ້ນກັບຕົນ ຕາມຄຳເຫັນດີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ;
6. ຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງ, ພະແນກ ແລະ ກອງວິຊາສະເພາະ ທີ່ຂຶ້ນກັບຕົນ ຕາມຄຳເຫັນດີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.

**ມາດຕາ 32. ການງົດຕໍາແໜ່ງ ແລະ ການແຕ່ງຕັ້ງນາຍຕໍາຫລວດໃຫ້ດໍາລົງຕໍາແໜ່ງຊົ່ວຄາວ**

ໃນກໍລະນີຮີບດ່ວນ ລັດຖະມົນຕີ, ຫົວໜ້າກົມໃຫຍ່, ຫົວໜ້າຫ້ອງວ່າການກະຊວງ, ຫົວໜ້າກົມ, ຫົວໜ້າກອງບັນຊາການ, ຜູ້ອໍານວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ, ຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນ ມີສິດງົດ ຫລື ຂໍອະນຸມັດປົດຕໍາແໜ່ງຂອງຜູ້ຢູ່ໃຕ້ການບັງຄັບບັນຊາຂອງຕົນ ທີ່ບໍ່ປະຕິບັດຄໍາສັ່ງ ຫລື ລະເມີດລະບຽບກົດໝາຍ ຊຶ່ງຈະກໍ່ຄວາມເສຍຫາຍໃຫ້ແກ່ກົມກອງ ແລະ ຜົນປະໂຫຍດຂອງປະເທດຊາດ ແລ້ວແຕ່ງຕັ້ງຜູ້ໃໝ່ມາຮັບຜິດຊອບແທນຊົ່ວຄາວ. ພ້ອມກັນນັ້ນ ກໍຕ້ອງລາຍງານໃຫ້ຂັ້ນເທິງຖັດຕົນຊາບໃນທັນໃດ ແລະ ສະເໜີຂັ້ນເທິງແຕ່ງຕັ້ງເປັນທາງການ ຕາມຂອບເຂດສິດ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 33. ການມອບຕໍາແໜ່ງຕໍ່າກວ່າຂັ້ນ**

ການມອບຕໍາແໜ່ງຕໍ່າກວ່າຂັ້ນ ຈະປະຕິບັດໄດ້ໃນກໍລະນີດັ່ງນີ້:

1. ມີການເພີ່ມທະວີການບັນຊາໃນການປະຕິບັດໜ້າທີ່ພິເສດ;
2. ມີການປ່ຽນແປງການຈັດຕັ້ງຂອງກົມກອງ: ກົງຈັກການຈັດຕັ້ງ ມີການປ່ຽນແປງ ຊຶ່ງບໍ່ຈໍາເປັນຕ້ອງມີຕໍາແໜ່ງ ທີ່ກ່ຽວຂ້ອງນັ້ນອີກ;
3. ມີການສັບຊ້ອນໃໝ່ ທີ່ແທດເໝາະກັບຄວາມຮູ້ຄວາມສາມາດ ແລະ ສຸຂະພາບຂອງນາຍ ແລະ ພົນຕໍາຫລວດ;
4. ນາຍ ແລະ ພົນຕໍາຫລວດ ບໍ່ມີເງື່ອນໄຂຄົບທີ່ຈະຮັບຕໍາແໜ່ງເທົ່າກັບຂັ້ນ.

## ໝວດທີ VII
## ອົງການຄຸ້ມຄອງ ແລະ ກວດກາ ຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ

**ມາດຕາ 34. ອົງການຄຸ້ມຄອງຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ**

ອົງການຄຸ້ມຄອງຂອງກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ມີດັ່ງນີ້:

- ກະຊວງປ້ອງກັນຄວາມສະຫງົບ;
- ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ;
- ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ;
- ປກສ ບ້ານ.

**ມາດຕາ 35. ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ ແລະ ແຜນຍຸດທະສາດ ວຽກງານປ້ອງກັນຄວາມສະຫງົບ ເພື່ອສະເໜີຕໍ່ລັດຖະບານ;

2. ຄົ້ນຄວ້າຫັນເອົານະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຂະແໜງການ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ;
3. ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ເພື່ອສະເໜີຕໍ່ລັດຖະບານ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ໃນຂະແໜງການຂອງຕົນ;
5. ຄຸ້ມຄອງ, ຊີ້ນຳ ແລະ ກວດກາ ຕາມສາຍຕັ້ງ ໃນການຈັດຕັ້ງປະຕິບັດວຽກງານ ແລະ ບຸກຄະລາກອນ ຂອງຂະແໜງການຕົນ;
6. ພິຈາລະນາແກ້ໄຂຄຳສະເໜີ, ຄຳຮ້ອງ ຂອງນາຍຕຳຫລວດ, ພົນຕຳຫລວດ ແລະ ພົນລະເມືອງ;
7. ກໍ່ສ້າງບຸກຄະລາກອນໃນຂະແໜງການຂອງຕົນ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;
9. ພົວພັນວຽກງານການຕ່າງປະເທດ ຕາມການເຫັນດີຂອງລັດຖະບານ;
10. ສະຫລຸບສັງລວມ ສະພາບການຈັດຕັ້ງປະຕິບັດວຽກງານຂະແໜງການຂອງຕົນ ແລ້ວລາຍງານຕໍ່ລັດຖະບານ ແລະນາຍົກລັດຖະມົນຕີ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ທີ່ລັດຖະບານມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 36. ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ**

ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດ ແຂວງ, ນະຄອນ;
2. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ; ມະຕິຄຳສັ່ງ, ແຜນການຂອງກະຊວງປ້ອງກັນຄວາມສະຫງົບ ເພື່ອຫັນເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຕົນ ແລ້ວຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;
3. ຈັດຕັ້ງປະຕິບັດວຽກງານຕາມຄຳສັ່ງຂອງສາຍຕັ້ງ ແລະ ຂອງຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນຂອງຕົນຢ່າງເຂັ້ມງວດ;
4. ຄຸ້ມຄອງ, ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ;
5. ຈັດຕັ້ງປະຕິບັດແຜນການກໍ່ສ້າງ, ບຳລຸງ, ພັດທະນາ ແລະ ຄຸ້ມຄອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຕາມຄວາມຮັບຜິດຊອບຂອງຕົນ;
6. ສ້າງແຜນ ແລະ ຄຸ້ມຄອງ ນຳໃຊ້ງົບປະມານ, ວັດຖຸ, ຍຸດໂທປະກອນ, ພາຫະນະເຕັກນິກວິຊາສະເພາະ, ບໍລິຫານ ແລະ ອອກແຮງສ້າງພະລາທິການກັບທີ່;

7. ປະສານສົມທົບກັບກອງບັນຊາການທະຫານແຂວງ, ນະຄອນ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;
8. ພົວພັນຮ່ວມມືກັບຕ່າງປະເທດ ຕາມການອະນຸຍາດຂອງຂັ້ນເທິງ;
9. ສະຫລຸບ ແລະ ລາຍງານກ່ຽວກັບການປະຕິບັດວຽກງານຂອງຕົນຕໍ່ຂັ້ນເທິງ;
10. ປະຕິບັດສິດ ແລະໜ້າທີ່ອື່ນ ທີ່ການຈັດຕັ້ງຂັ້ນເທິງຂອງຕົນມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງກອງບັນຊາການ ປກສ ເມືອງ, ເທດສະບານ**

ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດເມືອງ, ເທດສະບານ;
2. ຈັດຕັ້ງປະຕິບັດມະຕິ, ຄຳສັ່ງ, ແຜນການຂອງຂັ້ນເທິງ ແລະ ຂອງຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນຂອງຕົນຢ່າງເຂັ້ມງວດ;
3. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຂອງ ປກສ ກຸ່ມບ້ານ ແລະ ປກສ ບ້ານ;
4. ປະສານສົມທົບກັບກອງບັນຊາການທະຫານເມືອງ, ເທດສະບານ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;
5. ສະຫລຸບ ແລະ ລາຍງານກ່ຽວກັບການປະຕິບັດວຽກງານຂອງຕົນຕໍ່ຂັ້ນເທິງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ທີ່ການຈັດຕັ້ງຂັ້ນເທິງຂອງຕົນມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 38. ສິດ ແລະ ໜ້າທີ່ຂອງ ປກສ ບ້ານ**

ປກສ ບ້ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ພາຍໃນບ້ານຂອງຕົນ;
2. ສຶກສາອົບຮົມປະຊາຊົນ ເຊື່ອມຊຶມ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນ, ລະບຽບກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ແລະ ກົດລະບຽບບ້ານ;
3. ກວດກາ ເກັບກຳສະພາບສຳມະໂນຄົວ ລວມທັງຄົນຖິ່ນອື່ນ ທີ່ມາພັກເຊົາໃນຂອບເຂດບ້ານຂອງຕົນໃນແຕ່ລະໄລຍະ;
4. ຮັກສາຄວາມປອດໄພໃຫ້ຊາວຕ່າງປະເທດທີ່ມາເຄື່ອນໄຫວພັກເຊົາຢູ່ບ້ານຂອງຕົນ;
5. ປະສານສົມທົບກັບກຳລັງກອງຫລອນ, ກຳລັງປ້ອງກັນຕົວ, ກຳລັງຮັກສາຄວາມປອດໄພ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບໃນຂອບເຂດບ້ານຂອງຕົນ;
6. ສະຫຼຸບ ແລະ ລາຍງານ ກ່ຽວກັບການປະຕິບັດວຽກງານຂອງຕົນຕໍ່ ກອງບັນຊາການ ປກສ ເມືອງ, ເທດສະບານ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ທີ່ການຈັດຕັ້ງຂັ້ນເທິງຂອງຕົນມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 39. ພັນທະຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ມີ ພັນທະປະກອບສ່ວນ ດັ່ງນີ້:

1. ສຶກສາອົບຮົມ, ກໍ່ສ້າງ, ບຳລຸງ ແລະ ສະໜອງພະນັກງານວິຊາການ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ເພື່ອປະຕິບັດສຳເລັດໜ້າທີ່ວຽກງານ;
2. ຄົ້ນຄວ້າ, ສັບຊ້ອນ ແລະ ມອບໝາຍໜ້າທີ່ໃຫ້ນາຍ ແລະ ພົນຕຳຫລວດ ທີ່ຍົກຍ້າຍ ຈາກກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມາເຮັດໜ້າທີ່ຢູ່ຝ່າຍປົກຄອງ ຢ່າງເໝາະສົມ;
3. ຊ່ວຍເຫລືອດ້ານງົບປະມານ, ສະຖານທີ່ເຮັດວຽກ, ທີ່ພັກອາໄສ, ພາຫະນະ, ອຸປະກອນເຕັກນິກ, ວິຊາສະເພາະຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນ;
4. ຊ່ວຍເຫລືອເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ, ຄອບຄົວຜູ້ເສຍສະລະຊີວິດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ ແລະ ຜູ້ທີ່ພວມປະຕິບັດໜ້າທີ່ໃນຂອບເຂດທີ່ຕົນຮັບຜິດຊອບ.

**ມາດຕາ 40. ການແຕ່ງຕັ້ງພະນັກງານປ້ອງກັນຄວາມສະຫງົບໄປປະຕິບັດໜ້າທີ່ ຢູ່ຂະແໜງການອື່ນ**

ພະນັກງານປ້ອງກັນຄວາມສະຫງົບ ຈະຖືກແຕ່ງຕັ້ງໄປປະຕິບັດໜ້າທີ່ຢູ່ຂະແໜງການອື່ນ ໃນກໍລະນີທີ່ມີຄວາມຮຽກຮ້ອງຕ້ອງການອັນຈຳເປັນ ໃນການປົກປັກຮັກສາຄວາມສະຫງົບຂອງປະເທດຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຕາມການມອບໝາຍຂອງຂັ້ນເທິງ.

ພະນັກງານປ້ອງກັນຄວາມສະຫງົບ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຕິບັດໜ້າທີ່ນັ້ນ ຈະໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະກົດໝາຍອື່ນ ທີ່ກ່ຽວຂ້ອງ.

ບັນດາຂະແໜງການ ທີ່ພະນັກງານປ້ອງກັນຄວາມສະຫງົບໄດ້ໄປປະຕິບັດໜ້າທີ່ຢູ່ນັ້ນ ຕ້ອງມີຄວາມຮັບຜິດຊອບໃນການຮັກສາຄວາມລັບ, ຮັບປະກັນເງື່ອນໄຂເຮັດວຽກ ແລະ ການດຳລົງຊີວິດໃຫ້ພະນັກງານຜູ້ນັ້ນ ເພື່ອເຮັດສຳເລັດໜ້າທີ່ຕາມການມອບໝາຍ.

**ມາດຕາ 41. ອົງການກວດກາຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ອົງການກວດກາຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີດັ່ງນີ້:

- ກະຊວງປ້ອງກັນຄວາມສະຫງົບ;
- ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ;
- ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ.

ອົງການກວດກາ ອາດມອບໃຫ້ອົງການທີ່ເປັນເສນາທິການໃດໜຶ່ງ ປະຕິບັດການກວດກາແທນກໍໄດ້ ຕາມລະບຽບກົດໝາຍ.

## ໝວດທີ VIII
## ນະໂຍບາຍ, ຂໍ້ຫ້າມ, ການຍ້ອງຍໍ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 42. ການປະຕິບັດນະໂຍບາຍ

ການປະຕິບັດນະໂຍບາຍຕໍ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີດັ່ງນີ້:

1. ນາຍ ແລະ ພົນຕຳຫລວດ ປະຈຳການ ຈະໄດ້ຮັບເງິນເດືອນ, ເງິນອຸດໜູນ, ເຄື່ອງອຸປະໂພກ ແລະ ບໍລິໂພກ ຕາມລະບຽບການ; ສ່ວນນາຍຕຳຫລວດທີ່ເຊົາປະຈຳການ ຈະໄດ້ຮັບບຳນານ ຫລື ເງິນອຸດໜູນ ເທື່ອດຽວ ຕາມລະບຽບການ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 45 ຂອງກົດໝາຍສະບັບນີ້;
2. ນາຍຕຳຫລວດ ຜູ້ທີ່ໄດ້ຮັບຫລາຍຕຳແໜ່ງ ຈະໄດ້ຮັບນະໂຍບາຍຕາມຕຳແໜ່ງສູງສຸດ;
3. ນາຍ ແລະ ພົນຕຳຫລວດ ທີ່ຖືກຍົກຍ້າຍໄປເຮັດວຽກຢູ່ກົມກອງໃໝ່ ຈະໄດ້ຮັບນະໂຍບາຍຕາມຕຳແໜ່ງ, ໜ້າທີ່ໃໝ່;
4. ນາຍ ແລະ ພົນຕຳຫລວດ ປະຈຳການ ມີສິດລາພັກປະຈຳປີຕາມລະບຽບການ, ເວັ້ນເສຍແຕ່ໃນກໍລະນີ ພາວະສຸກເສີນ ຫລື ສົງຄາມ; ໃນກໍລະນີເກີດພາວະສຸກເສີນ ຫລື ສົງຄາມ ນາຍ ແລະພົນຕຳຫລວດ ທີ່ກຳລັງລາພັກຢູ່ນັ້ນ ຕ້ອງກັບຄືນກົມກອງດ່ວນ;
5. ນາຍ ແລະ ພົນຕຳຫລວດ ປະຈຳການ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຜູ້ເສຍອົງຄະ ຈະໄດ້ຮັບການເບິ່ງແຍງທາງດ້ານສຸຂະພາບ, ຖ້າມີການເຈັບເປັນຈະໄດ້ຮັບການປິ່ນປົວ ຕາມນະໂຍບາຍທີ່ໄດ້ກຳນົດໄວ້; ສຳລັບນາຍ ແລະ ພົນຕຳຫລວດທີ່ມີການເຈັບເປັນ, ຖືກບາດເຈັບໃນເວລາປະຕິບັດໜ້າທີ່ ຫລື ຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະໄດ້ຮັບການປິ່ນປົວ ໂດຍແມ່ນການຈັດຕັ້ງຮັບຜິດຊອບ;
6. ນາຍ ແລະ ພົນຕຳຫລວດ ຊຶ່ງເຮັດໜ້າທີ່ສູ້ຮົບ, ຮັບໃຊ້ການສູ້ຮົບຢ່າງພິລະອາດຫານ ຫລື ຖືກ ເສຍສະລະຊີວິດ ຈະໄດ້ຮັບການເລື່ອນຊັ້ນຕື່ມໜຶ່ງຊັ້ນ, ຂ້າມຊັ້ນ ຫລື ຂ້າມຂັ້ນ ແລະໃຫ້ນາມມະຍົດ ຕາມຄວາມເໝາະສົມ, ຖ້າຖືກເສຍຊີວິດໃນເວລາຮັບໃຊ້ສູ້ຮົບ ຫລື ໃນເວລາປະຕິບັດໜ້າທີ່ສຳເລັດ ຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະໄດ້ຮັບການເລື່ອນຊັ້ນໃຫ້ຕື່ມໜຶ່ງຊັ້ນ;
7. ນາຍ ແລະ ພົນຕຳຫລວດ ຈະໄດ້ຮັບນະໂຍບາຍໄປສຶກສາຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ;
8. ນາຍຕຳຫລວດແຕ່ຊັ້ນພັນເອກລົງມາທີ່ອອກຮັບບຳນານ ຈະບໍ່ໄດ້ເລື່ອນຊັ້ນຕື່ມອີກ ແຕ່ຈະໄດ້ຍົກເງິນເດືອນຕື່ມໜຶ່ງຊັ້ນ;

9. ນາຍ ແລະ ພົນຕຳຫລວດ ທີ່ໄດ້ອອກຈາກກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຊຶ່ງບໍ່ໄດ້ຖືກວິໄນຖອນຊັ້ນຂອງຜູ້ກ່ຽວ ໃຫ້ຮັກສານາມມະຍົດຊັ້ນຂອງຜູ້ກ່ຽວທີ່ຂັ້ນເທິງຕົກລົງໃຫ້ນັ້ນໄວ້ຄືເກົ່າ;
10. ນາຍ ແລະ ພົນຕຳຫລວດ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ບຳນານ ຈະໄດ້ຮັບການເຊື້ອເຊີນເຂົ້າຮ່ວມ ໃນວັນບຸນສຳຄັນຕ່າງໆຂອງຊາດ ແລະ ມີສິດນຳໃຊ້ເຄື່ອງແບບ, ເຄື່ອງໝາຍຍົດ, ໝາຍຊັ້ນຂອງຕົນ ຄືກັນກັບນາຍ ແລະ ພົນຕຳຫລວດປະຈຳການ.

ສຳລັບນະໂຍບາຍລະອຽດຕໍ່ນາຍ ແລະ ພົນຕຳຫລວດປະຈຳການ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຜູ້ເສຍສະລະຊີວິດ, ຜູ້ເສຍຊີວິດ, ພະນັກງານບຳນານ, ຜູ້ເສຍອົງຄະ, ຄອບຄົວພໍ່ແມ່ຂອງນາຍ ແລະ ພົນຕຳຫລວດທີ່ເສຍສະລະຊີວິດ, ເສຍຊີວິດ ແລະ ກຳລັງເຄື່ອງອາຊີບປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ມາດຕາ 43. ຂໍ້ຫ້າມ

ຂໍ້ຫ້າມຕົ້ນຕໍສຳລັບກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີດັ່ງນີ້:

1. ຫ້າມລະເມີດລະບຽບກົດໝາຍຂອງລັດ, ກົດລະບຽບ ແລະ ວິໄນຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;
2. ຫ້າມອອກຄຳສັ່ງ, ລະບຽບການ, ນະໂຍບາຍຕ່າງໆ ທີ່ຂັດກັບກົດໝາຍ, ຄຳສັ່ງ ຫລື ກົດລະບຽບ ທີ່ການຈັດຕັ້ງຂັ້ນເທິງວາງອອກ;
3. ຫ້າມປະລະໜ້າທີ່, ບໍ່ປະຕິບັດຕາມມະຕິຕົກລົງ ຫລື ຄຳສັ່ງຂອງຂັ້ນເທິງ;
4. ຫ້າມໃຊ້ສິດ, ໜ້າທີ່ຕຳແໜ່ງເກີນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຫ້າມໃຊ້ສິດ, ໜ້າທີ່ ແລະ ອາວຸດ ນາບຂູ່ປະຊາຊົນ;
6. ຫ້າມສວຍໃຊ້ສິດ, ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ;
7. ຫ້າມເອົາອາວຸດ, ລູກປືນ, ເຄື່ອງແບບ, ບັດຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ ບຸກຄົນໃນຄອບຄົວ ແລະ ຜູ້ອື່ນຢືມ, ນຳໃຊ້, ແລກປ່ຽນ, ຊື້ຂາຍ ຢ່າງເດັດຂາດ;
8. ຫ້າມທຸກການກະທຳ ທີ່ເປັນການແບ່ງແຍກ ມ້າງເພ ຄວາມສາມັກຄີພາຍໃນ.

## ມາດຕາ 44. ການຍ້ອງຍໍ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

ສຳລັບ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ມີຜົນງານດີເດັ່ນໃນການສູ້ຮົບ, ໃນການປະຕິບັດໜ້າທີ່ວິຊາສະເພາະ ແລະ ວຽກງານອື່ນ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ ເຊັ່ນ: ນາມມະຍົດ, ວິລະຊົນ, ນັກຮົບແຂ່ງຂັນ, ຫລຽນໄຊ, ຫລຽນກາ, ໃບຍ້ອງຍໍ, ເລື່ອນຊັ້ນ ຫລື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປະຕິບັດວິໄນ ຫຼື ດຳເນີນຄະດີ ຕາມລະບຽບກົດໝາຍ.

ສຳລັບ ນາຍ ແລະ ພົນຕຳຫລວດ ທີ່ໄດ້ລະເມີດລະບຽບກົດໝາຍ, ກົດລະບຽບ, ວິໄນຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈະຖືກປະຕິບັດວິໄນ ຕາມສະຖານເບົາ ຫລື ໜັກ ເຊັ່ນ: ສຶກສາອົບຮົມ, ຕຳນິ, ກ່າວເຕືອນ, ງົດການເລື່ອນຊັ້ນ, ຍົກຍ້າຍໜ້າທີ່, ປົດຊັ້ນ, ປົດຕຳແໜ່ງ ຫລື ໃຫ້ອອກຈາກກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ທີ່ໄດ້ກະທຳຜິດທາງອາຍາ ຈະຖືກດຳເນີນຄະດີ ຕາມກົດໝາຍ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

ໃນກໍລະນີ ທີ່ໄດ້ກະທຳຜິດໂດຍເຈດຕະນາ ແລະ ຖືກສານຕັດສິນລົງໂທດຕັດອິດສະລະພາບ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຈະໝົດສິດເປັນກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

## ໝວດທີ IX
## ວັນສ້າງຕັ້ງ ແລະ ເຄື່ອງໝາຍ ຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ມາດຕາ 46. ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແມ່ນ ວັນທີ 5 ເມສາ 1961.

ທຸກໆປີ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ພ້ອມກັບປະຊາຊົນລາວບັນດາເຜົ່າ ຈັດຕັ້ງການສະເຫລີມສະຫລອງວັນດັ່ງກ່າວ.

ມາດຕາ 47. ເຄື່ອງໝາຍຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ ເຄື່ອງແບບ, ເຄື່ອງໝາຍ, ເຄື່ອງໝາຍຊັ້ນ, ເຄື່ອງແບບເຫລົ່າລົບ, ຕາປະທັບ, ບັດປະຈຳການ ຂອງຕົນ ຊຶ່ງກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ X
## ບົດບັນຍັດສຸດທ້າຍ

ມາດຕາ 48. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 49. **ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ຫົກສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ